ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ

ກົມພາສີ

ເລກທີ 1784 /ກພສ

ນະຄອນຫລວງວຽງຈັນ, ລົງວັນທີ 28 JUN 2010

# ແຈ້ງການ

*ເຖິງ* : ບັນດາຫົວໜ້າພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນທົ່ວປະເທດ.

*ເລື້ອງ :* ການຄຸ້ມຄອງອອກໃບແຈ້ງພາສີຄ້ຳປະກັນ.

- ອີງຕາມກົດໝາຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20.05.2005.
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ ລົງວັນທີ 19.10.2007.
- ອີງຕາມແຈ້ງການແນະນຳກົມພາສີ ສະບັບເລກທີ 0204/ກພສ ລົງວັນທີ 31.10.2007 ວ່າດ້ວຍການນຳໃຊ້ໃບແຈ້ງພາສີຄ້ຳປະກັນ.

ຜ່ານມາ ກົມພາສີ ສັງເກດເຫັນວ່າ ການຈັດຕັ້ງປະຕິບັດລະບຽບການກ່ຽວກັບການຄຸ້ມຄອງໃບແຈ້ງພາສີຄ້ຳປະກັນຂອງບັນດາດ່ານພາສີຊາຍແດນ ຍັງທັນບໍ່ໄດ້ດີເທົ່າທີ່ຄວນ ຊຶ່ງສະແດງອອກ ຍັງມີການຄ້າງຊຳລະເປັນຈຳນວນຫລາຍ, ຂາດກົນໄກການເລັ່ງທວງຢ່າງເປັນລະບົບແລະເຮັດເປັນປະຈຳ ແລະ ບາງດ່ານຍັງມີລັກສະນະເອື້ອຍອີງໃສ່ແຕ່ກົມພາສີ. ເພື່ອແກ້ໃຂບັນຫາດັ່ງກ່າວ ທັງຮັບປະກັນການຈັດຕັ້ງລະບຽບກົດໝາຍ, ກົມພາສີ ອອກແຈ້ງການ; ຄື :

1. ມອບໃຫ້ຫົວໜ້າດ່ານພາສີຊາຍແດນ ເປັນຜູ້ພິຈາລະນາ ການສະເໜີຂໍນຳສິນຄ້າ,ເຄື່ອງຂອງອອກຈາກສາງ ຫລືດ່ານພາສີ ກ່ອນການແຈ້ງພາສີເປັນລາຍລະອຽດ ຕາມເງື່ອນໃຂທີ່ກຳນົດໄວ້ໃນມາດຕາ 7 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ ແລະ ແຈ້ງການແນະນຳກົມພາສີ ສະບັບເລກທີ 0204/ກພສ ລົງວັນທີ 31.10.2007. ພາຍຫລັງທີ່ໄດ້ອະນຸຍາດໃຫ້ສິນຄ້າ,ເຄື່ອງຂອງອອກກ່ອນແລ້ວຕ້ອງໄດ້ເອົາໃຈໃສ່ເລັ່ງທວງການຊຳລະ.

   ຖ້າພົບຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ໃຫ້ລາຍງານຂໍຄຳເຫັນນຳພາສີປະຈຳເຂດ ແລະ ກົມພາສີ ເປັນແຕ່ລະຂັ້ນ ເພື່ອມີທິດຊີ້ນຳ.

2. ພາຫະນະທຸກປະເພດ ທີ່ຕ້ອງການອອກກ່ອນ ຕ້ອງໄດ້ວາງເງິນຄ້ຳປະກັນ 120% ຂອງຄ່າພາສີ-ອາກອນຕາມອັດຕາສາລະບານ, ຍົກເວັ້ນມີຄຳແນະນຳຈາກກົມພາສີ ໃນການຈັດຕັ້ງປະຕິບັດ ເປັນກໍລະນີພິເສດ.

3. ທຸກການປະຕິບັດ ທີ່ບໍ່ສອດຄ່ອງກັບເນື້ອໃນແຈ້ງການສະບັບນີ້ ແມ່ນຄວາມຮັບຜິດຊອບໂດຍກົງຂອງເຈົ້າໜ້າທີ່ພາສີ ແຕ່ລະຂັ້ນ.
4. ມອບໃຫ້ບັນດາພາສີປະຈຳເຂດ ລົງຂຶ້ນຳດ່ານພາສີຊາຍແດນທີ່ຂື້ນກັບເຂດຕົນ ກວດກາຄືນໃບແຈ້ງພາສີຄ້ຳປະກັນ ບ85,ບ86 ທີ່ຄ້າງຊຳລະ ພ້ອມທັງຈັດຕັ້ງການເລັ່ງທວງ ໃຫ້ສຳເລັດໃນສົກປີ 2009-2010.
5. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ,ຈິ່ງແຈ້ງມາຍັງບັນທ່ານເພື່ອຊາບແລະພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ໂດຍ ພກ ຫົວໜ້າກົມພາສີ,

ສຳເນົາ :

- ຄະນະກົມພາສີ 1 ສະບັບ ເພື່ອຕິດຕາມກວດກາ.
- ພະແນກການກົມພາສີ 1 ສະບັບເພື່ອຊາບແລະປະສານສົມທົບ.
- ເກັບມ້ຽນສຳເນົາ 1 ສະບັບ

ອາດສະພັງທອງ ສີພັນດອນ
Athsaphangthong SIPHANDONE